ທະນາຄານຮ່ວມພັດທະນາ ມະຫາຊົນ
Joint Development Bank Public

ຂ່າວສານ

JDB ເປີດກອງປະຊຸມສະຫຼຸບຜົນດຳເນີນທຸລະກິດປະຈຳໄຕມາດ I ປະຈຳປີ 2026 ທະນາຄານຮ່ວມພັດທະນາ ມະຫາຊົນ











ໃນຕອນບ່າຍວັນທີ 22 ພຶດສະພາ 2026, ທະນາຄານຮ່ວມພັດທະນາ ມະຫາຊົນ Joint Development Bank Public (JDB) ໄດ້ເປີດກອງປະຊຸມສະຫຼຸບຜົນການດຳເນີນທຸລະກິດປະຈຳໄຕມາດ I ແລະ ແຜນດຳເນີນທຸລະກິດໄຕມາດ II ປະຈຳປີ 2026, ທີ່ສຳນັກງານໃຫຍ່ ທະນາຄານຮ່ວມພັດທະນາ ມະຫາຊົນ ນະຄອນຫຼວງວຽງຈັນ.

ພາຍໃຕ້ການເປັນປະທານກອງປະຊຸມຂອງ ທ່ານ ວິໄລ ສີພະພອນ ປະທານສະພາຜູ້ບໍລິຫານ ທະນາຄານຮ່ວມພັດທະນາ ມະຫາຊົນ, ພ້ອມດ້ວຍຄະນະຜູ້ບໍລິຫານ, ຄະນະພະແນກ ແລະ ໜ່ວຍບໍລິການພາຍໃນນະຄອນຫຼວງວຽງຈັນ. ນອກຈາກນີ້, ຍັງມີບັນດາໜ່ວຍບໍລິການຕ່າງແຂວງ ເຂົ້າຮ່ວມກອງປະຊຸມຜ່ານລະບົບ Video Conference. ເຊິ່ງເປັນກຽດກ່າວເປີດກອງປະຊຸມຢ່າງເປັນທາງການໂດຍ ທ່ານ ສາຄອນ ຍໍພັນໄຊ ຜູ້ອຳນວຍການ ທະນາຄານຮ່ວມພັດທະນາ ມະຫາຊົນ.

ກອງປະຊຸມໄດ້ມີການຮັບຟັງການລາຍງານເຖິງຜົນສ□າເລັດວຽກງານຫຼາຍໆດ້ານ, ໃນໄຕມາດ I ຂອງປີ 2026 ທີ່ຜ່ານມາ ໂດຍ JDB ສາມາດ ສ້າງຍອດຊັບສິນລວມມູນຄ່າ 44.8 ກວ່າຕື້ກີບ ທຽບ 85% ຂອງແຜນປີ 2026, ມີຍອດລາຍຮັບລວມມູນຄ່າ 787 ກວ່າຕື້ກີບ ເມື່ອທຽບໃສ່ແຜນ ສາມາດປະຕິບັດໄດ້ 74% ຂອງແຜນໄຕມາດ 1 ປີ 2026, ການສະໜອງສິນເຊື່ອປະຕິບັດໄດ້ 70% ເມື່ອທຽບໃສ່ແຜນການໄຕມາດ 1, ດ້ານຜົນການດຳເນີນທຸລະກິດປະຈຳໄຕມາດ1 ຂອງ JDB ສາມາດສ້າງລາຍຮັບຫລັງຫັກອາກອນ ໂດຍມີມູນຄ່າລວມ 157,020,419,386 ກີບ, ປະຕິບັດໄດ້ 14% ທຽບໃສ່ແຜນການປີ 2026, ຕົວເລກຜົນສຳເລັດອັນໂດດເດັ່ນນີ້ ບໍ່ພຽງແຕ່ສະແດງເຖິງການເຕີບໂຕຢ່າງຕໍ່ເນື່ອງ, ແຕ່ຍັງເປັນສິ່ງຢັ້ງຢືນເຖິງຄວາມໝັ້ນຄົງທາງດ້ານຖານະທາງການເງິນ ແລະ ຄວາມສາມາດໃນການບໍລິຫານຄວາມສ່ຽງທີ່ມີປະສິດທິພາບສູງ ພາຍໃຕ້ສະພາວະເສດຖະກິດທີ່ມີຄວາມສັບສົນ, ເຮັດໃຫ້ JDB ຍັງຄົງເປັນທະນາຄານທຸລະກິດຊັ້ນນຳ ທີ່ໄດ້ຮັບຄວາມໄວ້ວາງໃຈ ແລະ ມີສະພາບຄ່ອງທີ່ແຂງແຮງ ພ້ອມທີ່ຈະຮອງຮັບການບໍລິການລູກຄ້າໃນທຸກລະດັບຢ່າງມີສະຖຽນລະພາບ.

ພ້ອມກັນນັ້ນຍັງໄດ້ມີວາລະ ການເປີດໂຕ ຜະລິດຕະພັນໃໝ່ ບໍລິການສິນເຊື່ອແບບດິຈິຕອນ (Digital Lending) ທີ່ມີຊື່ວ່າ “ສິນເຊື່ອນ້ອງຟ້າ” ຜ່ານ App JDB YES Mobile Banking ບໍລິການສິນເຊື່ອເທິງມືຖືໃຫ້ກັບລູກຄ້າ, ໂດຍຜະລິດຕະພັນດັ່ງກ່າວ ໄດ້ຮັບການພັດທະນາຂຶ້ນບົນພື້ນຖານລະບົບເຕັກໂນໂລຊີທີ່ທັນສະໄໝ ແລະ ມີລະບົບຮັກສາຄວາມປອດໄພຂອງຂໍ້ມູນຂັ້ນສູງ ຕາມມາດຕະຖານສາກົນ , ເພື່ອໃຫ້ລູກຄ້າສາມາດເຂົ້າເຖິງແຫຼ່ງທຶນໄດ້ຢ່າງສະດວກ, ວ່ອງໄວ, ໂປ່ງໃສ ແລະ ມີຄວາມໝັ້ນໃຈ 100% ໃນທຸກການເຮັດທຸລະກຳທາງການເງິນ.

ໃນກອງປະຊຸມຍັງໄດ້ຮັບຟັງການໂອ້ລົມ ຈາກທ່ານ ເອກະພັນ ພະພິທັກ ປະທານຜູ້ຖືຮຸ້ນ ທະນາຄານຮ່ວມພັດທະນາ ມະຫາຊົນ ທ່ານໄດ້ ສະແດງຄວາມຍ້ອງຍໍຊົມເຊີຍ ຕໍ່ຜົນງານທີ່ປະຕິບັດໄດ້ ໃນໄຕມາດ 1 ທີ່ຜ່ານມາ ແລະ ຍົກໃຫ້ເຫັນ ສະພາບເສດຖະກິດຂອງໂລກ ຍັງມີຄວາມຫຍຸ້ງຍາກ ຢູ່ໃນພາວະສະລໍຕົວ ສະພາບການຂອງໂລກມີການຜັນແປຢ່າງສັບສົນ, ເຊິ່ງເປັນຜົນກະທົບຕໍ່ຄ່າຄອງຊີບທີ່ສູງຂຶ້ນ, ທ່ານໄດ້ ຮຽກຮ້ອງໃຫ້ພະນັກງານທຸກຄົນ ເອົາໃຈໃສ່ ວຽກງານຂອງຕົນໃຫ້ດີຂຶ້ນກວ່າເກົ່າ ເພື່ອບັນລຸເປົ້າໝາຍທີ່ວາງໄວ້. ຕໍ່ຈາກນັ້ນ ກໍໄດ້ຮັບຟັງ ການໂອ້ລົມ ຂອງ ທ່ານ ວິໄລ ສີພະພອນ ປະທານສະພາບໍລິຫານ ທະນາຄານຮ່ວມພັດທະນາ ມະຫາຊົນ ທ່ານໄດ້ ສະແດງຄວາມຂອບໃຈເປັນຢ່າງສູງມາຍັງ ປະທານຜູ້ຖືຮຸ້ນ ທີ່ໄດ້ໃຫ້ທິດຊີ້ນຳຢ່າງໃກ້ຊິດກັບຄະນະຜູ້ບໍລິຫານ ທະນາຄານຮ່ວມພັດທະນາ ມະຫາຊົນ ຕະຫລອດມາ ແລະ ຮຽກຮ້ອງໃຫ້ພະນັກງານທຸກຄົນ ຈົ່ງມີຄວາມສາມະຄີກັນເປັນປຶກແຜ່ນ ເພື່ອໃຫ້ບັນລຸຜົນສຳເລັດທີ່ວາງໄວ້, ແລະ ໄດ້ກ່າວປິດກອງປະຊຸມຢ່າງເປັນທາງການ.

ທະນາຄານຮ່ວມພັດທະນາ ມະຫາຊົນ ມຸ່ງໝັ້ນພັດທະນາການບໍລິການທີ່ເປັນເລີດ, ວ່ອງໄວ ແລະ ທັນສະໄໝ ເຊື່ອມຕໍ່ກັບສາກົນ ຖືເອົາຄວາມຕ້ອງການຂອງລູກຄ້າເປັນຫຼັກ, ພັດທະນາຜະລິດຕະພັນທາງການເງິນ ໃໝ່ຢ່າງສະໝ່ຳສະເໝີດ້ວຍລະບົບເທັກໂນໂລຍີທີ່ທັນສະໄໝ ປະສານກັບການບໍລິການທີ່ໂດດເດັ່ນຂອງພະນັກງານ, ສ້າງຜົນປະໂຫຍດສູງສຸດໃຫ້ກັບທຸກຝ່າຍ ເປັນສ່ວນສຳຄັນໃນການພັດທະນາປະເທດຊາດໃຫ້ຈະເລີນຮຸ່ງເຮືອງ.

ທະນາຄານຮ່ວມພັດທະນາ ມະຫາຊົນ **ເຕີບໃຫຍ່ໄປພ້ອມກັນ**